ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 327/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 ພຶດສະພາ 2020

# ຂໍ້ຕົກລົງ
# ວ່າດ້ວຍລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມຄຸ້ມຄອງລະບົບຊຳລະສະສາງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ມາດຕະການ ໃນການຄວບຄຸມ ແລະ ການນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມປອດໄພ, ຖືກຕ້ອງຕາມຂອບເຂດສິດ ແລະ ໜ້າທີ່ຮັບຜິດຊອບ ແນໃສ່ເຮັດໃຫ້ການຄວບຄຸມ ແລະ ການນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ**

ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ (Lao Payment and Settlement System = LaPASS) ແມ່ນໜຶ່ງໃນລະບົບການຊຳລະທີ່ສຳຄັນ ທີ່ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄວບຄຸມ ແລະ ໃຫ້ບໍລິການແກ່ສະມາຊິກ ເພື່ອປະຕິບັດໜ້າທີ່ໃນການໄລ່ລຽງ ແລະ ຫັກບັນຊີໃນລະບົບດັ່ງກ່າວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບັນຊີຊຳລະ** (Settlement Account) ໝາຍເຖິງ ບັນຊີເງິນຝາກຂອງສະມາຊິກທີ່ເປີດໄວ້ຢູ່ກົມບໍລິການທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ໃນການຫັກບັນຊີລະຫວ່າງສະມາຊິກທີ່ນຳໃຊ້ລະບົບ;

2. **ການຊຳລະງົບປະມານແຫ່ງລັດ** ໝາຍເຖິງ ທຸລະກຳການຊຳລະທີ່ຕິດພັນກັບລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ ຜ່ານລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ;

3. **ການຊຳລະທົ່ວໄປ** ໝາຍເຖິງ ທຸລະກຳການຊຳລະທີ່ຕິດພັນກັບລາຍຮັບ-ລາຍຈ່າຍ ທີ່ບໍ່ແມ່ນງົບປະມານແຫ່ງລັດ ຜ່ານລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ;

4. **ການຊຳລະແຊັກ** ໝາຍເຖິງ ທຸລະກຳການຊຳລະ ທີ່ຜູ້ຖືແຊັກນຳແຊັກໄປໂອນເຂົ້າບັນຊີຂອງຕົນ ຢູ່ທະນາຄານອື່ນ ຜ່ານລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ;

5. **ຜູ້ຄວບຄຸມລະບົບ** ໝາຍເຖິງ ກົມບໍລິການທະນາຄານ ທະນາຄານແຫ່ງ ສປປ ລາວ;

6. **ຜູ້ສະໜັບສະໜູນລະບົບ** ໝາຍເຖິງ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ທະນາຄານແຫ່ງ ສປປ ລາວ;

7. **ຜູ້ຄຸ້ມຄອງ** ໝາຍເຖິງ ກົມຄຸ້ມຄອງລະບົບຊຳລະສະສາງ ທະນາຄານແຫ່ງ ສປປ ລາວ;

8. **ລະບົບການຊຳລະທຸລະກຳຍ່ອຍ** ໝາຍເຖິງ ລະບົບໄລ່ລຽງແບບອັດຕະໂນມັດ, ລະບົບໄລ່ລຽງມູນຄ່າຫຼັກຊັບ ແລະ ລະບົບອື່ນໆ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ສະມາຊິກ, ຜູ້ຄວບຄຸມລະບົບ, ຜູ້ສະໜັບສະໜູນລະບົບ ແລະ ຜູ້ຄຸ້ມຄອງ.

## ໝວດທີ 2
## ໜ້າທີ່ຂອງລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ

**ມາດຕາ 5 ໜ້າທີ່ຂອງລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ**

ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ປະຕິບັດໜ້າທີ່ຜ່ານ ສອງ ລະບົບ ດັ່ງນີ້:

1. ລະບົບການຊຳລະແບບທັນທີ (Real Time Gross Settlement = RTGS);

2. ລະບົບໄລ່ລຽງແບບອັດຕະໂນມັດ (Automatic Clearing House = ACH).

ສຳລັບ ໜ້າທີ່ຂອງລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ສາມາດປ່ຽນແປງ ຫຼື ເພີ່ມເຕີມ ໃນແຕ່ລະໄລຍະ.

**ມາດຕາ 6 ລະບົບການຊຳລະແບບທັນທີ**

ລະບົບການຊຳລະແບບທັນທີ ແມ່ນການໂອນເງິນແບບເອເລັກໂຕຣນິກ ດ້ວຍການຫັກບັນຊີເທື່ອລະທຸລະກຳທັນທີເມື່ອໄດ້ຮັບຄຳສັ່ງຈ່າຍຂອງສະມາຊິກ ແລະ ເປັນຜູ້ຫັກບັນຊີສຸດທ້າຍໃຫ້ແກ່ລະບົບໄລ່ລຽງແບບອັດຕະໂນມັດ.

ທຸລະກຳໂອນເງິນ ທີ່ສາມາດດຳເນີນຜ່ານລະບົບການຊຳລະແບບທັນທີ ປະກອບມີ ການຊຳລະງົບປະມານແຫ່ງ ລັດ, ການຊຳລະທົ່ວໄປ ແລະ ການຊຳລະແຊັກ ທີ່ມີມູນຄ່າ ໜຶ່ງຮ້ອຍລ້ານ (100.000.000) ກີບຂຶ້ນໄປ.

ການໂອນເງິນຜ່ານລະບົບການຊຳລະແບບທັນທີ ປະກອບມີ ສອງ ຮູບແບບ ຄື:

1. ການໂອນເງິນລະຫວ່າງສະມາຊິກດ້ວຍກັນ (Institution Transfer) ແມ່ນສະມາຊິກສາມາດໂອນເງິນຈາກບັນຊີຂອງຕົນ ໄປຫາບັນຊີຂອງສະມາຊິກອື່ນ;

2. ການໂອນເງິນລະຫວ່າງສະມາຊິກດ້ວຍກັນ ໃຫ້ລູກຄ້າ (Single Customer Credit Transfer) ແມ່ນສະມາຊິກສາມາດໂອນເງິນຈາກບັນຊີລູກຄ້າຂອງຕົນ ໄປຫາບັນຊີລູກຄ້າຂອງສະມາຊິກຜູ້ຮັບ ຜ່ານບັນຊີຊຳລະ ຊຶ່ງລະບົບຈະສົ່ງຄຳສັ່ງຈ່າຍ, ລາຍລະອຽດການຮັບເງິນ ແລະ ຂໍ້ມູນຂອງລູກຄ້າ ໄປຫາບັນຊີສະມາຊິກຜູ້ຮັບ.

ການຫັກບັນຊີໃນລະບົບການຊຳລະແບບທັນທີ ປະກອບມີ ສອງ ຮູບແບບ ຄື:

1. ການຫັກບັນຊີຕາມຈຳນວນເງິນຂອງແຕ່ລະທຸລະກຳ (Gross Settlement) ແມ່ນການຫັກບັນຊີເປັນແຕ່ລະທຸລະກຳ ແລະ ຈະຖືກປະຕິບັດທັນທີເມື່ອເງິນໃນບັນຊີຂອງສະມາຊິກຜູ້ຈ່າຍພຽງພໍ, ຖ້າເງິນໃນບັນຊີສະມາຊິກຜູ້ຈ່າຍບໍ່ພຽງພໍ ທຸລະກຳດັ່ງກ່າວຈະຖືກຈັດເຂົ້າລຳດັບ ເພື່ອລໍຖ້າເງິນໃນບັນຊີສະມາຊິກຜູ້ຈ່າຍມີພຽງພໍຈຶ່ງສາມາດຫັກບັນຊີໄດ້;

2. ການຫັກບັນຊີສຸດທິ (Net Settlement) ແມ່ນການຫັກບັນຊີຕາມມູນຄ່າຍອດເຫຼືອສຸດທິ ໜຶ່ງ ຄັ້ງ ຫຼື ຫຼາຍຄັ້ງຕໍ່ວັນ ຕາມການກຳນົດຂອງຜູ້ຄວບຄຸມລະບົບ ພາຍຫຼັງການໄລ່ລຽງສຳເລັດຈາກລະບົບໄລ່ລຽງແບບອັດຕະໂນມັດ.

**ມາດຕາ 7 ລະບົບໄລ່ລຽງແບບອັດຕະໂນມັດ**

ລະບົບໄລ່ລຽງແບບອັດຕະໂນມັດ ແມ່ນການໄລ່ລຽງເປັນຊຸດທຸລະກຳ ຫຼື ເທື່ອລະທຸລະກຳໃຫ້ສະມາຊິກ ແລ້ວສົ່ງຍອດເຫຼືອສຸດທິໄປຫັກບັນຊີຢູ່ໃນລະບົບການຊຳລະແບບທັນທີ. ທຸລະກຳການຊຳລະທີ່ສາມາດດຳເນີນຜ່ານລະບົບໄລ່ລຽງແບບອັດຕະໂນມັດ ປະກອບມີ ການຊຳລະງົບປະມານແຫ່ງລັດ, ການຊຳລະທົ່ວໄປ ແລະ ການຊຳລະແຊັກ ທີ່ມີມູນຄ່າຕໍ່າກວ່າ ໜຶ່ງຮ້ອຍລ້ານ (100.000.000) ກີບ.

ສະມາຊິກຕ້ອງມີວົງເງິນການຊຳລະ (Debit Cap) ຊຶ່ງຫັກຈາກບັນຊີຊຳລະ ເພື່ອສຳຮອງໄວ້ໃນການຫັກບັນຊີຢູ່ໃນລະບົບການຊຳລະແບບທັນທີ ທີ່ສົ່ງຈາກລະບົບໄລ່ລຽງແບບອັດຕະໂນມັດໃຫ້ສຳເລັດຜົນ. ການສຳຮອງວົງເງິນການຊຳລະ ຕ້ອງບໍ່ເກີນ ສິບສ່ວນຮ້ອຍ (10%) ຂອງຈຳນວນເງິນໃນບັນຊີຊຳລະທີ່ຕົນມີໃນເວລາທີ່ມີການດຳເນີນທຸລະກຳ ຫຼື ຕາມການກຳນົດຂອງຜູ້ຄວບຄຸມລະບົບໃນແຕ່ລະໄລຍະ.

# ໝວດທີ 3

## ການດຳເນີນງານຂອງລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ

**ມາດຕາ 8 ການແກ້ໄຂທຸລະກຳຊຳລະທີ່ຜິດພາດ**

ໃນກໍລະນີທີ່ມີການດຳເນີນທຸລະກຳຊຳລະທີ່ຜິດພາດລະຫວ່າງສະມາຊິກຜູ້ຈ່າຍ ແລະ ສະມາຊິກຜູ້ຮັບ ຕ້ອງດຳເນີນການໄກ່ເກ່ຍກັນເອງ ເປັນຕົ້ນ ການນຳໃຊ້ຂໍ້ຄວາມສົນທະນາລະຫວ່າງສະມາຊິກ (Text message) ໃນລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ເພື່ອສື່ສານກ່ຽວກັບ ຂໍ້ຜິດພາດທີ່ເກີດຂຶ້ນໃນການດຳເນີນທຸລະກຳຊຳລະ.

ໃນກໍລະນີທີ່ສະມາຊິກໄດ້ດຳເນີນການໄກ່ເກ່ຍແລ້ວ ແຕ່ຍັງບໍ່ສາມາດແກ້ໄຂຂໍ້ຂັດແຍ່ງນັ້ນໄດ້ ສະມາຊິກສາມາດສະເໜີຕໍ່ຜູ້ຄວບຄຸມລະບົບ ເພື່ອພິຈາລະນາແກ້ໄຂຕາມລະບຽບການ.

**ມາດຕາ 9 ການແກ້ໄຂພາວະຕິດຂັດ**

ພາວະຕິດຂັດ ແມ່ນການດຳເນີນທຸລະກຳຊຳລະທີ່ບໍ່ສຳເລັດ ທີ່ເກີດຈາກການຂາດສະພາບຄ່ອງລະຫວ່າງສະມາຊິກຜູ້ຈ່າຍ ແລະ ສະມາຊິກຜູ້ຮັບ ທີ່ມີການດຳເນີນທຸລະກຳລະຫວ່າງກັນຕັ້ງແຕ່ ສອງ ລາຍຂຶ້ນໄປ.

ການແກ້ໄຂພາວະຕິດຂັດ ຜູ້ຄວບຄຸມລະບົບຈະດຳເນີນການແກ້ໄຂດ້ວຍ ສອງ ຮູບແບບ ຄື:

1. ຖ້າຍອດເຫຼືອຂອງບັນຊີຊຳລະ ລວມກັບທຸລະກຳລໍຖ້າຮັບເຂົ້າ ຂອງແຕ່ລະສະມາຊິກ ມີພຽງພໍຕໍ່ການດຳເນີນທຸລະກຳຊຳລະ ລະບົບຈະດຳເນີນການຊຳລະ ແລະ ຫັກບັນຊີທັນທີ;

2. ຖ້າຍອດເຫຼືອຂອງບັນຊີຊຳລະ ລວມກັບທຸລະກຳລໍຖ້າຮັບເຂົ້າ ຂອງແຕ່ລະສະມາຊິກ ບໍ່ພຽງພໍຕໍ່ການດຳເນີນທຸລະກຳຊຳລະ ລະບົບຈະບໍ່ດຳເນີນການຊຳລະ ແລະ ຫັກບັນຊີ, ສະມາຊິກຕ້ອງເພີ່ມເງິນເຂົ້າບັນຊີຊຳລະຂອງຕົນເພື່ອແກ້ໄຂບັນຫາດັ່ງກ່າວ.

**ມາດຕາ 10 ຜົນການຊຳລະ**

ຄຳສັ່ງໂອນເງິນ ຫຼື ຫັກບັນຊີ ທີ່ສົ່ງເຂົ້າລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຈະມີຜົນການຊຳລະສົມບູນ ກໍຕໍ່ເມື່ອຜູ້ຄວບຄຸມລະບົບໄດ້ຫັກເງິນຈາກບັນຊີສະມາຊິກຜູ້ຈ່າຍ ແລະ ນຳເຂົ້າບັນຊີສະມາຊິກຜູ້ຮັບ. ໃນເວລາທີ່ການຊຳລະມີຜົນສົມບູນແລ້ວ ຜູ້ຄວບຄຸມລະບົບ ແລະ ສະມາຊິກ ບໍ່ສາມາດໂຈະ, ດັດແກ້, ຍົກເລີກ ຫຼື ຂັດຄ້ານ.

**ມາດຕາ 11 ການດັດສົມສະພາບຄ່ອງ**

ການດັດສົມສະພາບຄ່ອງໃນລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຕ້ອງປະຕິບັດ ດັ່ງນີ້:

1. ຜູ້ຄວບຄຸມລະບົບຕ້ອງມີລະບຽບການຄຸ້ມຄອງສະພາບຄ່ອງ ພາຍໃນຂອງຕົນ ຢ່າງເໝາະສົມ;

2. ສະມາຊິກຕ້ອງຮັກສາສະພາບຄ່ອງ ຂອງບັນຊີຊຳລະໄວ້ໃຫ້ພຽງພໍໃນການຫັກບັນຊີແຕ່ລະວັນ ເພື່ອຮັບປະກັນໃຫ້ການຫັກບັນຊີທ້າຍວັນ;

3. ສະມາຊິກສາມາດແກ້ໄຂສະພາບຄ່ອງຂອງຕົນ ເມື່ອເຫັນວ່າເພດານການຈ່າຍ ຂາດດຸນ ຫຼື ເກີນດຸນ ໃນການຫັກບັນຊີ.

**ມາດຕາ 12 ສະກຸນເງິນ**

ສະກຸນເງິນ ທີ່ສາມາດນຳໃຊ້ດຳເນີນທຸລະກຳຊຳລະຜ່ານລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ປະກອບມີ ສີ່ ສະກຸນ ຄື: ກີບ, ໂດລາສະຫະລັດ, ບາດ ແລະ ຢວນ. ສະກຸນເງິນທີ່ນຳໃຊ້ດຳເນີນທຸລະກຳຊຳລະ ແມ່ນຈະມີການປັບປຸງ ໃນແຕ່ລະໄລຍະ.

**ມາດຕາ 13 ເວລາໃນການບໍລິການ**

ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ແມ່ນເປີດບໍລິການທຸກວັນລັດຖະການ ເລີ່ມແຕ່ ເວລາ 09:00 ໂມງ ຫາ 15:30 ໂມງ, ເວັ້ນແຕ່ຜູ້ຄວບຄຸມລະບົບ ຈະແຈ້ງໃຫ້ສະມາຊິກຊາບກ່ຽວກັບການປັບປຸງເວລາດັ່ງກ່າວ ຕາມຄວາມຈຳເປັນ.

**ມາດຕາ 14 ຄ່າບຳລຸງຮັກສາ ແລະ ຄ່າບໍລິການ**

ຄ່າບຳລຸງຮັກສາ ແລະ ຄ່າບໍລິການ ຂອງລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ມີດັ່ງນີ້:

1. ຄ່າບຳລຸງຮັກສາຂອງສະມາຊິກ ຈຳນວນ ສາມລ້ານ ກີບ ຕໍ່ປີ ໂດຍຜູ້ຄວບຄຸມລະບົບຈະຫັກຈາກບັນຊີກະແສລາຍວັນຂອງສະມາຊິກ ພາຍໃນອາທິດທີ ສອງ ຂອງເດືອນມັງກອນ. ສຳລັບສະມາຊິກໃໝ່ ຕ້ອງຈ່າຍຄ່າບຳລຸງຮັກສາຕາມຈຳນວນເດືອນຂອງປີທີ່ຂໍເຂົ້າເປັນສະມາຊິກ ພາຍໃນ ສາມ ວັນລັດຖະການ ຫຼັງຈາກໄດ້ຮັບໃບຢັ້ງຢືນການເຂົ້າເປັນສະມາຊິກ. ຄ່າບຳລຸງຮັກສາໃນການນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຈະບໍ່ໄດ້ສົ່ງຄືນໃຫ້ສະມາຊິກບໍ່ວ່າຈະເປັນກໍລະນີໃດກໍຕາມ.

2. ຄ່າບໍລິການທຸລະກຳຊຳລະຂອງສະມາຊິກຜູ້ຈ່າຍ ມີດັ່ງນີ້:

2.1 ລະບົບການຊຳລະແບບທັນທີ

- ທຸລະກຳທົ່ວໄປ ສຳລັບສະກຸນເງິນກີບ ຈຳນວນ ຫ້າພັນ ກີບ ຕໍ່ທຸລະກຳ;
- ທຸລະກຳທົ່ວໄປ ສຳລັບສະກຸນເງິນໂດລາສະຫະລັດ, ບາດ ແລະ ຢວນ ຈຳນວນ ແປດພັນ ກີບ ຕໍ່ທຸລະກຳ;
- ທຸລະກຳແຊັກ ສຳລັບສະກຸນເງິນກີບ ຈຳນວນ ສິບພັນ ກີບ ຕໍ່ທຸລະກຳ;
- ທຸລະກຳແຊັກ ສຳລັບສະກຸນເງິນໂດລາສະຫະລັດ, ບາດ ແລະ ຢວນ ຈຳນວນ ສິບຫ້າພັນ ກີບ ຕໍ່ທຸລະກຳ.

2.2 ລະບົບໄລ່ລຽງແບບອັດຕະໂນມັດ

- ທຸລະກຳທົ່ວໄປ ສຳລັບສະກຸນເງິນກີບ ຈຳນວນ ສາມພັນ ກີບ ຕໍ່ທຸລະກຳ;

- ທຸລະກຳທົ່ວໄປ ສຳລັບສະກຸນເງິນໂດລາສະຫະລັດ, ບາດ ແລະ ຢວນ ຈຳນວນ ຫ້າພັນ ກີບ ຕໍ່ທຸລະກຳ;
- ທຸລະກຳແຊັກ ສຳລັບສະກຸນເງິນກີບ ຈຳນວນ ສິບພັນ ກີບ ຕໍ່ທຸລະກຳ;
- ທຸລະກຳແຊັກ ສຳລັບສະກຸນເງິນໂດລາສະຫະລັດ, ບາດ ແລະ ຢວນ ຈຳນວນ ສິບຫ້າພັນ ກີບ ຕໍ່ທຸລະກຳ.

ຄ່າບໍລິການທຸລະກຳຊຳລະຂອງສະມາຊິກຜູ້ຈ່າຍ ແມ່ນສັງລວມເປັນແຕ່ລະເດືອນ ໂດຍຜູ້ຄວບຄຸມລະບົບ ຈະຫັກຈາກບັນຊີກະແສລາຍວັນຂອງສະມາຊິກຜູ້ຈ່າຍ ພາຍໃນອາທິດທີ ສອງ ຂອງທຸກໆເດືອນ.

ຄ່າບໍລິການທຸລະກຳຊຳລະຂອງສະມາຊິກຜູ້ຈ່າຍ ທີ່ຕິດພັນກັບທຸລະກຳຊຳລະງົບປະມານແຫ່ງລັດ ແມ່ນຖືກຍົກເວັ້ນ.

3. ຄ່າບໍລິການນຳໃຊ້ລະບົບທີ່ສະມາຊິກເກັບນຳລູກຄ້າ ຕ້ອງກຳນົດບໍ່ເກີນ ສາມເທົ່າ ຂອງຄ່າບໍລິການທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້.

## ໝວດທີ 4
## ຜູ້ເຂົ້າຮ່ວມລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ

### ມາດຕາ 15 ຜູ້ເຂົ້າຮ່ວມລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ

ຜູ້ເຂົ້າຮ່ວມລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ປະກອບມີ ດັ່ງນີ້:

1. ສະມາຊິກ (Member);
2. ຜູ້ຄວບຄຸມລະບົບ (System Operator);
3. ຜູ້ສະໜັບສະໜູນລະບົບ (ICT Supporter);
4. ຜູ້ຄຸ້ມຄອງ (Overseer).

### ມາດຕາ 16 ເງື່ອນໄຂການເປັນສະມາຊິກ

ຜູ້ທີ່ມີຈຸດປະສົງຂໍເປັນສະມາຊິກ ນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ຄວບຄຸມລະບົບຍ່ອຍ, ສະຖາບັນການເງິນ ແລະ ຄັງເງິນແຫ່ງຊາດ ທີ່ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ;

2. ມີບັນຊີເງິນຝາກກະແສລາຍວັນ ແລະ ບັນຊີຊຳລະ (Settlement Account) ຢູ່ກົມບໍລິການທະນາຄານ ທະນາຄານແຫ່ງ ສປປ ລາວ;

3. ມີລະບົບເຄືອຂ່າຍ ທີ່ສາມາດເຊື່ອມຕໍ່ເຂົ້າກັບ ລະບົບເຄືອຂ່າຍ ຂອງທະນາຄານແຫ່ງ ສປປ ລາວ ຕາມລະບຽບການທີ່ກ່ຽວຂ້ອງ;

4. ມີ ຮາດແວ (Hardware) ແລະ ຊ໋ອບແວ (Software) ທີ່ຮອງຮັບການນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຕາມທີ່ລະບຸໄວ້ໃນຄູ່ມືການນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ;

5. ມີພະນັກງານ ຜູ້ຮັບຜິດຊອບນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຢ່າງໜ້ອຍ ສອງ ຄົນ (ຜູ້ສ້າງທຸລະກຳ ແລະ ຜູ້ອະນຸມັດ) ເພື່ອຮັບປະກັນຄວາມປອດໄພ ແລະ ປ້ອງກັນການສໍ້ໂກງພາຍໃນອົງກອນ;

6. ສາມາດຮັບປະກັນ ການດຳເນີນງານຢ່າງຕໍ່ເນື່ອງ;

7. ເງື່ອນໄຂອື່ນ ຕາມການກຳນົດຂອງຜູ້ຄວບຄຸມລະບົບ.

**ມາດຕາ 17 ເອກະສານປະກອບການຂໍເປັນສະມາຊິກ**

ເອກະສານປະກອບການຂໍເປັນສະມາຊິກ ປະກອບມີ ດັ່ງນີ້:

1. ໜັງສືສະເໜີຂໍເປັນສະມາຊິກ ຕາມແບບພິມຂອງຜູ້ຄວບຄຸມລະບົບ;

2. ໜັງສືຍິນຍອມການຫັກບັນຊີເງິນຝາກກະແສລາຍວັນ ແລະ ການດຳເນີນທຸລະກຳເງິນເບີກເກີນບັນຊີຂອງສະມາຊິກທີ່ນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຕາມແບບພິມຂອງຜູ້ຄວບຄຸມລະບົບ;

3. ສຳເນົາລະບຽບການຄຸ້ມຄອງການກັດສິນສະພາບຄ່ອງພາຍໃນຂອງຕົນ;

4. ເອກະສານອື່ນ ຕາມການກຳນົດຂອງຜູ້ຄວບຄຸມລະບົບ.

**ມາດຕາ 18 ການພິຈາລະນາ**

ຜູ້ຄວບຄຸມລະບົບ ຈະພິຈາລະນາການຂໍເປັນສະມາຊິກນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃນໄລຍະຂອງການພິຈາລະນາເອກະສານປະກອບ ຜູ້ຄວບຄຸມລະບົບຈະທົບທວນຄືນ ເງື່ອນໄຂການເຂົ້າຮ່ວມ, ກວດສອບ ແລະ ທົດລອງລະບົບທາງດ້ານເຕັກນິກ ຂອງຜູ້ສະເໜີ.

ເມື່ອເຫັນວ່າຜູ້ສະເໜີມີເງື່ອນໄຂຄົບຖ້ວນ ແລະ ຜ່ານການກວດສອບແລ້ວ, ຜູ້ຄວບຄຸມລະບົບ ຈະອອກໃບຢັ້ງຢືນການເປັນສະມາຊິກ ພ້ອມທັງ ອອກຊື່ຜູ້ນຳໃຊ້, ລະຫັດຜ່ານ ແລະ ຈັດຝຶກອົບຮົມການນຳໃຊ້ຕົວຈິງ ໃຫ້ແກ່ສະມາຊິກໃໝ່.

**ມາດຕາ 19 ການໂຈະ ຫຼື ການຍົກເລີກ ເປັນສະມາຊິກ**

ຜູ້ຄວບຄຸມລະບົບ ຈະໂຈະ ຫຼື ຍົກເລີກ ການເປັນສະມາຊິກນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ທັງໝົດ ຫຼື ບາງປະເພດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສະມາຊິກຂໍໂຈະ ຫຼື ຍົກເລີກເອງດ້ວຍຄວາມສະໝັກໃຈ;

2. ສະມາຊິກຢູ່ໃນພາວະໃຊ້ໜີ້ບໍ່ໄດ້ (Insolvency);

3. ສະມາຊິກ ບໍ່ສາມາດປະຕິບັດຕາມລະບຽບການ ຂອງ ທະນາຄານແຫ່ງ ສປປ ລາວ ວາງອອກ;

4. ມີທຸລະກຳທີ່ໜ້າສົງໄສ, ເປັນການສໍ້ໂກງ ຫຼື ການເຄື່ອນໄຫວ ທີ່ກ່ຽວຂ້ອງກັບການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (Anti-Money Laundering /Counter Finance Terrorism= AML/CFT);

5. ມີຄຳສັ່ງຈາກສານເພື່ອໃຫ້ ຢຸດຕິການນຳໃຊ້ແບບຊົ່ວຄາວ ຫຼື ຖາວອນ;

6. ສະມາຊິກທີ່ມີພຶດຕິກຳຂັດຂວາງການດຳເນີນງານ ແລະ ສ້າງຄວາມເສຍຫາຍ ຊຶ່ງອາດກໍ່ໃຫ້ເກີດຄວາມສ່ຽງຕໍ່ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຫຼື ສະມາຊິກອື່ນ.

ສະມາຊິກທີ່ຖືກຍົກເລີກໃຫ້ນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ສາມາດຂໍເຂົ້າເປັນສະມາຊິກຄືນໃໝ່ ແລະ ຕ້ອງດຳເນີນການຕາມຂັ້ນຕອນການສະເໜີເປັນສະມາຊິກ ແລະ ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 20 ສິດ ແລະ ໜ້າທີ່ ຂອງສະມາຊິກ

ສະມາຊິກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບທຸກໆທຸລະກຳ ແລະ ເນື້ອໃນຂອງຂໍ້ຄວາມ ທີ່ຕົນເອງສ້າງຂຶ້ນ;

2. ແຈ້ງໃຫ້ຜູ້ຄວບຄຸມລະບົບຊາບທັນທີ ເພື່ອບໍ່ໃຫ້ເກີດຜົນກະທົບເຖິງສະມາຊິກອື່ນ ໃນກໍລະນີລະບົບຜິດປົກກະຕິ ບໍ່ວ່າຈະເປັນທາງດ້ານເຕັກນິກ ຫຼື ການດຳເນີນທຸລະກຳຊຳລະບໍ່ສຳເລັດ;

3. ຮັກສາສະພາບຄ່ອງຂອງບັນຊີຊຳລະໄວ້ໃຫ້ພຽງພໍໃນການຫັກບັນຊີແຕ່ລະວັນ;

4. ສ້າງ ແລະ ທົດສອບ ແຜນຮອງຮັບເຫດການສຸກເສີນພາຍໃນຂອງຕົນ ທີ່ອາດຈະເກີດຜົນກະທົບແກ່ລະ ບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ;

5. ບັນທຶກເຫດການ ແລະ ບັນຫາລະບົບທັງໝົດໄວ້ເປັນລາຍລັກອັກສອນ ເພື່ອລາຍງານໃຫ້ຜູ້ຄວບຄຸມລະບົບ ໃນທຸກໆ ທ້າຍ ເດືອນ ຊຶ່ງການບັນທຶກຕ້ອງປະກອບມີລາຍລະອຽດຂອງ ວັນທີ, ເວລາ, ລັກສະນະຂອງບັນຫາ, ການປະຕິບັດເພື່ອການແກ້ໄຂ ແລະ ເວລາຂອງການແກ້ໄຂຢ່າງລະອຽດ.

6. ຈັດລຳດັບຄວາມສຳຄັນຂອງທຸລະກຳ ໃນກໍລະນີມີຫຼາຍທຸລະກຳລໍຖ້າການຊຳລະໃນລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ;

7. ຮັກສາຄວາມຕໍ່ເນື່ອງໃນການໃຫ້ບໍລິການລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ;

8. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃນກໍລະນີມີການກວດສອບຈາກຜູ້ຄວບຄຸມລະບົບ ແລະ ຜູ້ຄຸ້ມຄອງ;

9. ແຈ້ງໃຫ້ຜູ້ຄວບຄຸມລະບົບຊາບ ໃນກໍລະນີມີການປ່ຽນແປງຜູ້ຮັບຜິດຊອບນໍາໃຊ້ລະບົບ (ຜູ້ສ້າງທຸລະກໍາ ແລະ ຜູ້ອະນຸມັດ) ແລະ ປະສານສົມທົບກັບຜູ້ຄວບຄຸມລະບົບເພື່ອຈັດຝຶກອົບຮົມການນໍາໃຊ້ລະບົບໃຫ້ແກ່ຜູ້ຮັບຜິດຊອບໃໝ່;

10. ສະເໜີຂໍເຊື່ອມຕໍ່ລະບົບໂປຣແກຣມບໍລິຫານບັນຊີຂອງຕົນ ກັບລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ;

11. ເປີດລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ ໄວ້ຕະຫຼອດເວລາ ແລະ ເອົາໃຈໃສ່ກວດສອບສະຖານະເຊື່ອມຕໍ່ກັບເຄືອຂ່າຍຂອງຜູ້ຄວບຄຸມລະບົບ ໃນໄລຍະເວລາການໃຫ້ບໍລິການຂອງວັນລັດຖະການ ເຖິງວ່າຈະບໍ່ມີລາຍການໂອນກໍ່ຕາມ;

12. ຮັກສາ ແລະ ປ້ອງກັນ ຂໍ້ມູນທີ່ຕິດພັນກັບລະບົບໃຫ້ເປັນຄວາມລັບ;

13. ເປີດເຜີຍຄ່າບໍລິການນໍາໃຊ້ລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ ເປັນຕົ້ນ ຜ່ານເວັບໄຊທາງການຂອງສະມາຊິກ ແລະ ຮູບແບບອື່ນ ໃຫ້ແກ່ລູກຄ້າຊາບ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງຜູ້ຄວບຄຸມລະບົບ**

ຜູ້ຄວບຄຸມລະບົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກໍານົດລະບຽບການ ແລະ ນະໂຍບາຍການດໍາເນີນງານຕ່າງໆ ຂອງລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ;

2. ແຕ່ງຕັ້ງ ແລະ ປັບປຸງ ຄະນະຮັບຜິດຊອບຄວບຄຸມລະບົບ;

3. ຄົ້ນຄວ້າ ແລະ ພິຈາລະນາການ ເຂົ້າ, ໂຈະ ແລະ ຍົກເລີກ ເປັນສະມາຊິກ ໂດຍປະສານສົມທົບກັບຜູ້ສະໜັບສະໜູນລະບົບ;

4. ຈັດຝຶກອົບຮົມ, ເຜີຍແຜ່ ແລະ ໃຫ້ຄໍາແນະນໍາ ກ່ຽວກັບລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ;

5. ຕິດຕາມ ແລະ ກວດກາ ການນໍາໃຊ້ລະບົບຂອງສະມາຊິກ ໃຫ້ສອດຄ່ອງກັບເງື່ອນໄຂ ແລະ ລະບຽບການທີ່ກໍານົດໄວ້ໃນແຕ່ລະໄລຍະ;

6. ຕິດຕາມ ແລະ ກວດກາ ສະພາບຄ່ອງຕ່າງໆ ຂອງສະມາຊິກ ຢ່າງເປັນປະຈໍາໃນເວລາໃຫ້ບໍລິການລະບົບ;

7. ດຶງດຸນສະພາບຄ່ອງຂອງທຸລະກໍາຊໍາລະຂອງສະມາຊິກ ພາຍໃນ ສິບຫ້າ ນາທີ ກ່ອນລະບົບຈະປິດການດໍາເນີນການຊໍາລະ ດ້ວຍການໂອນເງິນຈາກບັນຊີກະແສລາຍວັນຫາບັນຊີຊໍາລະຂອງສະມາຊິກ ໂດຍບໍ່ຈໍາເປັນຕ້ອງແຈ້ງໃຫ້ສະມາຊິກຊາບລ່ວງໜ້າ;

8. ກຳນົດນະໂຍບາຍຄວາມຕໍ່ເນື່ອງຂອງທຸລະກິດ (Business Continuity Management = BCM) ແລະ ແຜນຮອງຮັບຄວາມຕໍ່ເນື່ອງຂອງທຸລະກິດ (Business Continuity Plan = BCP) ຮ່ວມກັບຜູ້ສະໜັບສະໜູນລະບົບ;

9. ທົດສອບແຜນຮອງຮັບຄວາມຕໍ່ເນື່ອງຂອງທຸລະກິດ (BCP) ຂອງລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ ຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ ຮ່ວມກັບຜູ້ສະໜັບສະໜູນລະບົບ;

10. ແຈ້ງໃຫ້ສະມາຊິກຊາບກ່ຽວກັບບັນຫາທີ່ອາດຈະກໍ່ໃຫ້ເກີດຄວາມຫຍຸ້ງຍາກ ຕໍ່ການເຮັດວຽກໂດຍລວມຂອງລະບົບ;

11. ກຳນົດຄ່າບຳລຸງຮັກສາ ແລະ ຄ່າບໍລິການ ໃນການນຳໃຊ້ລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ ເພື່ອສະເໜີຂັ້ນເທິງພິຈາລະນາ;

12. ຮັກສາ ແລະ ປ້ອງກັນ ຂໍ້ມູນທີ່ຕິດພັນກັບລະບົບໃຫ້ເປັນຄວາມລັບ;

13. ລາຍງານການເຄື່ອນໄຫວການດຳເນີນທຸລະກຳຊໍາລະຜ່ານລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ ໃຫ້ຜູ້ຄຸ້ມຄອງຊາບຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງຜູ້ສະໜັບສະໜູນລະບົບ**

ຜູ້ສະໜັບສະໜູນລະບົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດລະບຽບການ ແລະ ນະໂຍບາຍກ່ຽວກັບການນຳໃຊ້ໃນການຕິດຕັ້ງ, ກວດສອບ, ບຳລຸງຮັກສາລະບົບ ແລະ ການບໍລິຫານຄວາມສ່ຽງທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ;

2. ຕິດຕັ້ງ, ກວດສອບ, ປັບປຸງ ແລະ ບຳລຸງຮັກສາລະບົບ ດ້ານເຕັກນິກ ແລະ ເຕັກໂນໂລຊີ ດ້ວຍຕົນເອງ ແລະ/ຫຼື ປະສານສົມທົບກັບຜູ້ສະໜອງລະບົບ ແລະ/ຫຼື ບໍລິສັດທີ່ປຶກສາ ເພື່ອໃຫ້ການຕິດຕັ້ງມີຄວາມປອດໄພ ແລະ ໄດ້ມາດຕະຖານຕາມການກຳນົດຂອງຜູ້ສະໜອງລະບົບ ແລະ ມາດຕະຖານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ໜ່ວຍແມ່ຂ່າຍ (Servers), ຖານຂໍ້ມູນ (Data Base), ການປ້ອງກັນອາຊະຍາກຳທາງລະບົບຄອມພິວເຕີ (Cyber Attacks), ການຄຸ້ມຄອງວັດຖຸເຕັກນິກ ແລະ ອຸປະກອນຕ່າງໆທີ່ຕິດພັນກັບການຄວບຄຸມ ແລະ ການນຳໃຊ້ລະບົບການຊໍາລະ ແລະ ຫັກບັນຊີ ຂອງ ສປປ ລາວ;

3. ຄົ້ນຄວ້າສ້າງ ແລະ ປັບປຸງ ລະບຽບການກ່ຽວກັບການບໍລິຫານຄວາມສ່ຽງທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ຕິດພັນກັບລະບົບ;

4. ແຕ່ງຕັ້ງ ແລະ ປັບປຸງ ຄະນະຮັບຜິດຊອບຕິດຕາມ ແລະ ລາຍງານ ຄວາມສ່ຽງຂອງລະບົບ;

5. ປະເມີນ, ທົບທວນ ແລະ ທົດສອບ ຄວາມສ່ຽງຂອງລະບົບ ແລະ ຈັດຕັ້ງປະຕິບັດຕາມແຜນຮອງຮັບຄວາມສ່ຽງຂອງລະບົບຮ່ວມກັບຜູ້ຄວບຄຸມລະບົບ ແລະ ສະມາຊິກ ຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ ຫຼື ທຸກຄັ້ງທີ່ມີການປ່ຽນແປງ ຫຼື ການປັບປຸງລະບົບ;

6. ກຳນົດນະໂຍບາຍຄວາມຕໍ່ເນື່ອງຂອງທຸລະກິດ (Business Continuity Management = BCM) ແລະ ແຜນຮອງຮັບຄວາມຕໍ່ເນື່ອງຂອງທຸລະກິດ (Business Continuity Plan = BCP) ຮ່ວມກັບຜູ້ຄວບຄຸມລະບົບ;

7. ທົດສອບແຜນຮອງຮັບຄວາມຕໍ່ເນື່ອງຂອງທຸລະກິດ (BCP) ຂອງລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ ຮ່ວມກັບຜູ້ຄວບຄຸມລະບົບ;

8. ຮັກສາ ແລະ ປ້ອງກັນ ຂໍ້ມູນທີ່ຕິດພັນກັບລະບົບໃຫ້ເປັນຄວາມລັບ;

9. ຮັກສາຄວາມປອດໄພດ້ານເຕັກໂນໂລຊີຂໍ້ມູນຂ່າວສານຂອງລະບົບການຊຳລະ ແລະ ຫັກບັຊີ ຂອງ ສປປ ລາວ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 23 ຜູ້ຄຸ້ມຄອງ

ຜູ້ຄຸ້ມຄອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ຜູ້ເຂົ້າຮ່ວມລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດບັນດາຫຼັກການ, ມາດຕະຖານ ແລະ ລະບຽບການຕ່າງໆ ກ່ຽວກັບລະບົບການຊຳລະ ແລະ ຫັກບັນຊີ ຂອງສປປ ລາວ;

2. ຄົ້ນຄວ້າສ້າງ ແລະ ປັບປຸງ ບັນດານະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບຄວາມຮັບຜິດຊອບຂອງຕົນໃຫ້ແທດເໝາະກັບຫຼັກການສາກົນໃນແຕ່ລະໄລຍະ;

3. ຮຽກເອົາຂໍ້ມູນຕ່າງໆທີ່ຕິດພັນກັບລະບົບ ຈາກຜູ້ເຂົ້າຮ່ວມລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຕາມຄວາມເໝາະສົມ;

4. ຄົ້ນຄວ້າພິຈາລະນາແກ້ໄຂຂໍ້ຂັດແຍ່ງຕ່າງໆ ລະຫວ່າງຜູ້ເຂົ້າຮ່ວມລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ;

5. ສະເໜີຜູ້ຄວບຄຸມລະບົບ ໃຫ້ປັບປຸງ, ພັດທະນາ ແລະ ແກ້ໄຂບັນຫາຕ່າງໆ ກ່ຽວກັບລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ເພື່ອຮັບປະກັນຜົນສຳເລັດໃນການປະຕິບັດວຽກງານ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 24 ຂໍ້ຫ້າມ

ຫ້າມສະມາຊິກ, ຜູ້ຄວບຄຸມລະບົບ ແລະ ຜູ້ສະໜັບສະໜູນລະບົບ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ເພື່ອດຳເນີນທຸລະກຳຊຳລະ ຫຼື ແລກປ່ຽນຂໍ້ມູນຂ່າວສານທີ່ບໍ່ສອດຄ່ອງກັບລະບຽບການ ຂອງທະນາຄານແຫ່ງ ສປປ ລາວ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ນຳໃຊ້ ຊື່ຜູ້ນຳໃຊ້ ແລະ ລະຫັດຜ່ານ ຂອງຜູ້ອື່ນເຂົ້າລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;

3. ເປີດເຜີຍຂໍ້ມູນທີ່ຕິດພັນກັບລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ ຍົກເວັ້ນໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ;

4. ມີພຶດຕິກຳອື່ນ ທີ່ສ້າງຄວາມເສຍຫາຍໃຫ້ລະບົບການຊຳລະ ແລະ ຫັກບັນຊີ ຂອງ ສປປ ລາວ.

### ມາດຕາ 25 ມາດຕະການຕໍ່ຜູ້ລະເມີດ

ສະມາຊິກ, ຜູ້ຄວບຄຸມລະບົບ ແລະ ຜູ້ສະໜັບສະໜູນລະບົບ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ດຳເນີນຄະດີ ຕາມກົດໝາຍ.

## ໝວດທີ 6

## ບົດບັນຍັດສຸດທ້າຍ

### ມາດຕາ 26 ການຈັດຕັ້ງປະຕິບັດ

ສະມາຊິກ, ຜູ້ຄວບຄຸມລະບົບ, ຜູ້ສະໜັບສະໜູນລະບົບ ແລະ ຜູ້ຄຸ້ມຄອງ ເປັນເຈົ້າການປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 27 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນແບບທັນທີ ສະບັບເລກທີ 531/ທຫລ, ລົງວັນທີ 04 ກໍລະກົດ 2016.

ສຳລັບ ສະມາຊິກ ທີ່ໄດ້ຮັບອະນຸຍາດກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດ ຕ້ອງມີເງື່ອນໄຂ ແລະ ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ແລະ 17 ຂອງຂໍ້ຕົກລົງສະບັບນີ້ ແລະ ນຳສົ່ງໃຫ້ຜູ້ຄວບຄຸມລະບົບພາຍໃນ ສາມສິບ ວັນ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

ສອນໄຊ ສິດພະໄຊ